*Souphanouvong University Journal of Multidisciplinary Research and Development*
*2025, Vol. 11, No. 01, 218-224*
*https://doi.org/10.69692/SUJMRD1101218*

# Study the Implementation of Education Quality Assurance in Pasatipaatai Secondary School in Luang Prabang District

**Vongphiboun VONGPHACHANH[1], Kalaphath KOUNLASAY[2] , Kinnaly THIPPHAPHONE[3] , Domone KONEPHACHITH[4]**

*Master candidate, Program in Education and Development; Faculty of Education Souphanouvong University, Lao PDR*

***Correspondence:** Vongphiboun VONGPHACHANH[1] Faculty of Education Souphanouvong University Tel: +8652055673329 Email: vvongphiboun@gmail.com

***Article Info:***
***Submitted: February 11, 2025***
***Revised: March 15, 2025***
***Accepted: March 31, 2025***

***Abstract***

This research aims to 1) study the implementation of quality assurance in Pasathipatai secondary schools in Luang Prabang and 2) determine the guidelines for quality assurance in Pasathipatai secondary schools in Luang Prabang. The sample group of 46 people consisted of 3 administrators and 43 teachers by finding the mean and standard deviation. The results of the research found that overall, it was at a high level with a mean value of ($\overline{X}$= 4.07; S.D= 0.41). The guidelines for implementing education quality assurance at the Pasathipatai School in Luang Prabang can be seen in six aspects: students, teaching and learning, environment, teaching and learning equipment, management and administration and community participation. It was found that there should be promotion and motivation for students to be interested in coming to school regularly, compete with each other, and strictly follow school rules. Teachers should have a variety of teaching techniques to convey knowledge to students, select teachers who are qualified and equipped in all aspects, praise teachers who teach well and are good at creating achievements for the school and send them to upgrade to develop higher academic and technological skills. Encourage students to know how to care for the environment and arrange the school yard to be clean and attractive. School administrators should inspect the condition of classroom equipment and provide sufficient necessary equipment, use libraries, real-time experimental tools and computers in conjunction with teaching and learning, encourage teachers to produce more teaching and learning media and have a focused school development plan with a short-term and long-term perspective, providing opportunities for teachers to participate in planning discussions to properly. administrators should work closely with associations, parents, and village-level education development committees to help mobilize the community to participate, contribute to school support and see the importance of education.

**Keywords:** quality assurance, quality school, education, secondary school

## 1. **ພາກສະເໜີ**

ຊັບພະຍາກອນມະນຸດແມ່ນປັດໃຈສຳຄັນຢ່າງໜຶ່ງໃນການພັດທະນາປະເທດຊາດໃຫ້ມີຄວາມຈະເລີນກ້າວໜ້າ ແລະ ທັນສະໄໝຕາມການປ່ຽນແປງຂອງກະແສສັງຄົມ, ດ້ວຍເຫດນັ້ນລັດຖະບານແຫ່ງ ສປປ ລາວ ຍາມໃດກໍ່ໄດ້ໃຫ້ຄວາມສຳຄັນກ່ຽວກັບບັນຫານີ້ເຊິ່ງໄດ້ກຳນົດວິໄສທັດຮອດປີ 2030 ຂອງລັດຖະບານກ່ຽວກັບການຜະລິດທີ່ເຂັ້ມແຂງ ແລະ ຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມ, ໜຶ່ງໃນຍຸດທະສາດການພັດທະນາຂອງຂະແໜ່ງການສຶກສາ ແລະ ກິລາ ເພື່ອສ້າງຊັບພະຍາກອນມະນຸດໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດສິນທຳປະຕິວັດ ແລະ ມີຄວາມຖືກຕ້ອງ, ມີນ້ຳໃຈຮັກປະເທດຊາດ, ຊື່ສັດບໍລິສຸດ, ມີລະບຽບວິໄນ, ມີສຸຂະພາບທາງດ້ານຮ່າງກາຍ ແລະ ຈິດໃຈດີ, ມີຄວາມສາມັກຄີພາຍໃນຊາດ,ມີຄວາມຮັກຕໍ່ການຮຽນຮູ້ຕະຫຼອດຊີວິດ, ຮັກຄວາມກ້າວໜ້າ ແລະ ມີວິທະຍາສາດ ເພື່ອໃຫ້ກາຍເປັນກຳລັງແຮງທີ່ມີຄຸນນະພາບ, ສອດຄ່ອງ ແລະ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງການຂະຫຍາຍຕົວທາງດ້ານເສດຖະກິດຂອງຊາດທີ່ຍືນຍົງ, ມີຄວາມພ້ອມທີ່ຈະຮ່ວມມື ແລະ ແຂ່ງຂັນກັບບັນດາປະເທດໃນພາກພື້ນ. (ກະຊວງສຶກສາທິການແລະກິລາ, 2020) ການສຶກສາເປັນຮາກຖານທີ່ສຳຄັເປັນໃຈກາງຂອງການກຽມຄົນ,ດ້ວຍການປະຕິຮູບການສຶກສາແຫ່ງຊາດໃຫ້ມີຄຸນນະພາບ, ໄດ້ມາດຕະຖານສູງຂຶ້ນ ໂດຍສຸມໃສ່ແຜນງານປັບປຸງຄຸນນະພາບ, ຄວາມສອດຄ່ອງ, ແຜນງານບໍລິຫານ, ຄຸ້ມຄອງການສຶກສາຢ່າງົມກຽວ; ຂະຫຍາຍໂອການດ້ານການສຶກສາໃຫ້ກວ້າງຂວາງ ທົ່ວເຖິງກວ່າເກົ່າ; ຮັບປະກັນໃຫ້ການສຶກສາດຳເນີນໄປຢ່າງກົມກ່ຽວຕາມ 5 ຫຼັກມູນ ແລະ 3 ລັກສະນະ; ປັບປຸງພື້ນຖານໂຄງລ່າງ, ພື້ນຖານວັດຖຸ-ເຕັກນິກຂອງສະຖານການສຶກສາໃຫ້ໄດ້ທັງມາດຕະຖານ ແລະ ຄຸນນະພາບເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າວຽກຕົວຈິງຢູ່ໃນອົງການພັກ-ລັດ ແລະ ສັງຄົມ. (ຄະນະໂຄສະນາອົບຮົມສູນກາງພັກ, 2023) ເພື່ອພັດທະນາສັກກະຍະພາບຂອງມະນຸດມັນຈຳເປັນຕ້ອງໃຫ້ການສຶກສາມີຄຸນນະພາບຢ່າງຕໍ່ເນື່ອງເພື່ອຈະເຮັດໃຫ້ເກີດຄວາມຫມັ້ນໃຈ ແກ່ຜູ້ກ່ຽວຂ້ອງທຸກພາກສ່ວນວ່າການຈັດການສຶກສາຂອງສະຖານສຶກສາມີຄຸນນະພາບໄດ້ມາດຕະຖານ ກົດໝາຍການສຶກສາໃນ ມາດຕາ 64 ໄດ້ກ່າວວ່າ: ການປະກັນຄຸນະພາບການສຶກສາ ແມ່ນການກຳນົດມາດຕະຖານ, ການຕິດຕາມ, ປະເມີນຜົນ ແລະ ກວດສອບຄຸນນະພາບການສຶກສາທັງພາກລັດ ແລະ ເອກະຊົນ ດ້ວຍການຈັດຕັ້ງກົນໄກປະກັນຄຸນນະພາບພາຍໃນ ແລະ ພາຍນອກໂດຍມີຈຸດປະສົງເພື່ອຮັບຮອງ ແລະ ຢັ້ງຢືນຜົນຂອງການສຶກສາ, ເພື່ອສ້າງຄວາມເຊື່ອໝັ້ນຕໍ່ສັງຄົມ, ຊຸມຊົນ ແລະ ຜູ້ປົກຄອງດຶງດູດຄວາມສົນໃຈຕໍ່ການຮຽນເຮັດໃຫ້ຜົນຂອງການສຶກສາມີຄຸນນະພາບໄດ້ມາດຕະຖານທຽບເທົ່າກັບພາກພື້ນ ແລະ ສາກົນ. (ກົດໝາຍການສຶກສາ , 2015)

ເພື່ອຕອບສະໜອງນະໂຍບາຍດັ່ງກ່າວ ກະຊວງສຶກສາທິການ ແລະ ກິລາ ໄດ້ສ້າງແຜນການປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນ (EFA) ໄດ້ເນັ້ນໜັກໃຫ້ນັກຮຽນທຸກຄົນທີ່ຮຽນຈົບຊັ້ນປະຖົມສຶກສາ ໄດ້ມີໂອກາດເຂົ້າຮຽນໃນຊັ້ນມັດທະຍົມສຶກສາ ແລະ ສືບຕໍ່ຮຽນມັດທະຍົມຕອນຕົ້ນ ແລະ ຕອນປາຍຈົນຈົບຢ່າງມີຄຸນນະພາບ ຫຼື ສາມາດຮຽນຕໍ່ຂັ້ນທີ່ສູງກວ່າ. ດັ່ງນັ້ນ, ຈຶ່ງພັດທະນາມາດຕະຖານຄຸນນະພາບການສຶກສາໃນສາຍສາມັນຂຶ້ນ ນັບແຕ່ປີ 2004 ເປັນຕົ້ນມາກະຊວງສຶກສາທິການ ແລະ ກິລາໄດ້ກຳນົດມາດຕະຖານຄຸນນະພາບການສຶກສາຂຶ້ນໃນຊັ້ນປະຖົມສຶກສາ ແລະ ທົດລອງນຳໃຊ້ເຜີຍແຜ່ ໃນໂຮງຮຽນປະຖົມ ສາທິດ ຂອງສະຖາບັນສ້າງຄູ ໃນປີ 2009 ຈາກແນວຄວາມຄິດກ່ຽວກັບໂຮງຮຽນຄຸນນະພາບ ໄດ້ຖືກນຳໄປເຜີຍແຜໃຫ້ຜູ້ບໍລິຫານແລະອາຈານສອນ ແລະ ການຈັດຕັ້ງປະຕິບັດຕົວຈິງຈາກປະສົບການເຫັນວ່າມີຄວາມສຳຄັນໃນການພັດທະນາຄຸນນະພາບການສຶກສາ, ກໍໄດ້ພັດທະນາມາຄູ່ມືການນຳໃຊ້ມາດຕະການປະກັນຄຸນນະພາບການສຶກສາຊັ້ນປະຖົມຂຶ້ນ ແລະ ຖືກນຳໃຊ້ທົ່ວປະເທດຢ່າງເປັນທາງການ ແຕ່ປີ 2010 ເປັນຕົ້ນມາ. (ມາດຕະຖານຄຸນນະພາບການສຶກສາສຳລັບຊັ້ນປະຖົມສຶກສາ, 2013b) ຈາກການຈັດຕັ້ງປະຕິບັດມາດຕະຖານໂຮງຮຽນຄຸນນະພາບສຳລັບຊັ້ນປະຖົມເປັນພື້ນຖານມາກ່ອນ ເພື່ອສ້າງບຸກຄະລາກອນທີ່ມີໃຫ້ມີຄວາມຮູ້, ຄວາມສາມາດ ແລະ ທັດສະນະຄະຕິຕາຫຼັກມູນຂອງການສຶກສາ, ຫຼັງຈາກນັ້ນຈຶ່ງພັດທະນາມາດຕະຖານຄຸນນະພາບການສຶກສາສຳລັບຊັ້ນມັດທະຍົມສຶກສາ ໃນ 2010ໃນ 6 ອົງປະກອບ ແລະ 45 ຕົວຊີ້ວັດປະກອບດ້ວຍ 1) ດ້ານຜູ້ຮຽນ, 2) ດ້ານການຮຽນ-ການສອນ, 3) ດ້ານສະພາບແວດລ້ອມ, 4) ດ້ານອຸປະກອນການຮຽນ-ການສອນ, 5) ດ້ານຄຸ້ມຄອງ-ບໍລິຫານ ແລະ 6) ດ້ານການມີສ່ວນຮ່ວມຂອງຊຸມຊົນເພື່ອເປັນທິດທາງໃຫ້ໂຮງຮຽນ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາ ແຂວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໃນການກຳນົດມາດຕະຖານ ແລະ ຕົວຊີ້ວັດ, ເພື່ອໃຊ້ເປັນຫຼັກ, ການສົ່ງເສີມ, ການກວດສອບ, ການປະເມີນໃນການປະກັນຄຸນນະພາບການສຶກສາເພື່ອພັດທະນາການສຶກສາໃຫ້ມີຄຸນນະພາບຕາມມາດຕະຖານສູງຂຶ້ນເທື່ອລະກ້າວມາ. (ມາດຕະຖານຄຸນນະພາບການສຶກສາສຳລັບຊັ້ນມັດທະຍົມສຶກສາ, 2013c)

ໂຮງຮຽນມັດທະຍົມສົມບູນ ປະຊາທິປະໄຕແມ່ນໂຮງຮຽນແຫ່ງໜຶ່ງທີ່ເກົ່າແກ່ຕັ້ງຢູ່ໃຈກາງ ນະຄອນຫຼວງພະບາງ ໄດ້ ຮັບການສ້າງຕັ້ງຂຶ້ນໃນປີ 1945 ມີພະນັກງານຄູທັງໝົດ 46 ຄົນ, ຍິງ 34 ຄົນ, ພາຍໃນໂຮງຮຽນແຫ່ງນີ້ມີການຈັດການ ຮຽນ-ການສອນໃນລະບົບຫ້ອງສອງພາສາຄື: ຫ້ອງຮຽນສາຍລາວ ແລະ ຫ້ອງຮຽນສາຍຝຣັ່ງ ແຕ່ ມ.1 ຫາ ມ.7 ມີນັກຮຽນທັງໝົດ 723 ຄົນ,ຍິງ 392 ຄົນ, ມີນັກຮຽນມັດທະຍົມຕອນຕົ້ນ 492 ຄົນ,ຍິງ 263 ຄົນ, ມີນັກຮຽນມັດທະຍົມຕອນປາຍ 231 ຄົນ,ຍິງ 129 ຄົນ.ໂຮງຮຽນແຫ່ງນີ້ແມ່ນເປົ້າໝາຍໜຶ່ງທີ່ທາງຫ້ອງການສຶກສາທິການ ແລະກິລາ ນະຄອນ ຈະສ້າງເປັນໂຮງຮຽນຄຸນນະພາບ ຫຼື ໂຮງຮຽນຕົວແບບ, ເພື່ອເຮັດໃຫ້ວຽກງານການປະກັນຄຸນນະພາບໄດ້ຮັບການຈັດຕັ້ງປະຕິບັດໃນແຕ່ລະປີໂຮງຮຽນໄດ້ມີການປະເມີນໂຮງຮຽນໃນແຕ່ລະດ້ານ ຕາມມາດຖານການປະກັນຄຸນນະພາບເພື່ອເປັນການປະເມີນຜົນການບໍລິຫານຂອງຜູ້ບໍລິຫານ ແລະ ຄູເປັນຫຼັກປະກັນໃຫ້ຜູ້ຮຽນ ແລະ ສັງຄົມໄດ້ມີຄວາມໝັ້ນໃຈວ່າຈະໄດ້ຮັບການບໍລິການທີ່ດີຈາກໂຮງຮຽນຕາມມາດຕະຖານທີ່ກຳນົດໄວ້ ແລະ ເປັນການຊ່ວຍໃຫ້ໂຮງຮຽນມີການພັດທະນາຄຸນນະພາບທີ່ດີຂຶ້ນຢ່າງຕໍ່ເນື່ອງເພື່ອກາຍເປັນໂຮງຮຽນຕົວແບບໃນແຕ່ລະດ້ານ.

ການປະກັນຄຸນນະພາບການສຶກສາໃນໄລຍະຜ່ານມາເຫັນວ່າຍັງບໍ່ຄ່ອຍເຮັດໄດ້ດີປານໃດໃນການດຳເນີນຕາມຫຼັກການ, ມາດຕະຖານຄຸນນະພາບການສຶກສາໃນສາຍສາມັນສຶກສາຕາມ

ມາດຕະຖານໃນ 6 ດ້ານ 45 ຕົວຊີວັດ ຍັງປະຕິບັດບໍ່ທັນຊັດເຈນພາຍໃນໂຮງຮຽນຈຶ່ງພົບບັນຫາ 1) ຜູ້ບໍລິຫານ ແລະ ຄູຜູ້ທີ່ຮັບຜິດຊອບໃນວຽກປະກັນຄຸນນະພາບບໍ່ເຂົ້າໃຈລະບົບ, ຫຼັກການ ແລະ ວິທີການຢ່າງລະອຽດ ຈຶ່ງເຮັດໃຫ້ການປະກັນຄຸນນະພາບພາຍໃນໂຮງຮຽນຍັງບໍ່ພັດທະນາໄດ້ເຕັມທີ່ ແລະ ຕໍ່ເນື່ອງ. 2) ບັນຫາຂັ້ນຕອນການປະກອບແຟ້ມເອກະສານ ໃນ 6 ດ້ານມາດຖານຄຸນນະພາບແຕ່ລະດ້ານຍັງບໍ່ສອດຄ່ອງກັບການປະຕິບັດງານຕົວຈິງກັບການປະຕິບັດວຽກງານການປະກັນຄຸນນະພາບການສຶກສາ. (ຫ້ອງການສຶກສາທິການແລະກິລາ ນະຄອນຫຼວງພະບາງ, 2024) ສະນັ້ນ,ຈຶ່ງເຫັນໄດ້ຄວາມສຳຄັນຕໍ່ກັບການປະກັນຄຸນນະພາບການສຶກສາຈຶ່ງຖືວ່າເປັນວຽກປົກກະຕິ ທີ່ຈະຕ້ອງປະຕິບັດເປັນປະຈຳ ໃນໂຮງຮຽນແຕ່ລະແຫ່ງເພື່ອເປັນການຕິດຕາມ , ປະເມີນຜົນ ແລະ ກວດສອບຄຸນນະພາບການສຶກສາທັງພາກລັດ ແລະ ເອກະຊົນ ດ້ວຍການຈັດຕັ້ງກົນໄກປະກັນຄຸນນະພາບພາຍໃນ ແລະ ພາຍນອກ ເພື່ອສ້າງຄວາມເຊື່ອໝັ້ນຕໍ່ສັງຄົມ, ຊຸມຊົນ ແລະ ຜູ້ປົກຄອງດຶງດູດຄວາມສົນໃຈຕໍ່ການຮຽນ ເຮັດໃຫ້ຜົນຂອງການສຶກສາມີມາດຕະຖານຄຸນນະພາບ.

ຈາກການປະເມີນການປະກັນຄຸນນະພາບເຫັນວ່າໃນການດຳເນີນວຽກງານການປະກັນຄຸນນະພາບຍັງມີບັນຫາແຕ່ຍັງບໍ່ມີການສຶກສາວິໄຈເຖິງແນວທາງການປະກັນຄຸນນະພາບການສຶກສາເພື່ອໃຫ້ໂຮງຮຽນໄດ້ມາດຖານການສຶກສາ ແລະ ກາຍເປັນໂຮງຮຽນຕົວແບບ, ລວມທັງຂໍ້ສະເໜີແນວທາງແກ້ໄຂຂອງ ຜູ້ອຳນວຍການ ແລະ ຄູສອນ. ຜູ້ສຶກສາໄດ້ເຫັນຄວາມສຳຄັນມີຈຸດປະສົງຄົ້ນຄວ້າ 1)ເພື່ອສຶກສາການດຳເນີນການຈັດຕັ້ງປະຕິບັດການປະກັນຄຸນນະພາບການສຶກສາພາຍໃນໂຮງຮຽນມັດທະຍົມສົມບູນ ປະຊາທິປະໄຕ ຢູ່ນະຄອນ ຫຼວງພະບາງ; 2)ເພື່ອສຶກສາແນວທາງການປະກັນຄຸນນະພາບການສຶກສາພາຍໃນໂຮງຮຽນມັດທະຍົມສົມບູນ ປະຊາທິປະໄຕ ຢູ່ນະຄອນ ຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍໃນການສຶກສາໃນຄັ້ງນີ້ແມ່ນກຳນົດເອົາຜູ້ບໍລິຫານແລະຄູສອນພາຍໃນໂຮງຮຽນມັດທະຍົມສົມບູນ ປະຊາທິປະໄຕ ຢູ່ນະຄອນຫຼວງພະບາງ ຈຳນວນ 46 ທ່ານ, ຍິງ 34 ທ່ານ.ໂດຍເປັນການເຈາະຈົງເນື່ອງຈາກກຸ່ມຕົວຢ່າງມີຈຳນວນໜ້ອຍ ຈຶ່ງກຳນົດເອົາທັງໝົດເພື່ອເປັນກຸ່ມຕົວຢ່າງໃນການຄົ້ນຄວ້າ.

### 2.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ປະກອບດ້ວຍ ແບບສອບຖາມເປັນເຄື່ອງມືໃນການເກັບກຳຂໍ້ມູນທັງໝົດ ເຊິ່ງມີ ລັກສະນະຄຳຕອບເປັນແບບປະເມີນຄ່າ 5 ລະດັບຂອງ Likert Scale (Likert, 1932) ເຊິ່ງມີຂະບວນການສ້າງເຄື່ອງມືດັ່ງນີ້:

ພາຍຫຼັງຜູ້ຄົ້ນຄວ້າໄດ້ສັງລວມບັນດາເອກະສານທີ່ກ່ຽວຂ້ອງທັງໝົດແລ້ວ ຄັດຈ້ອນເອົາບັນດາຂໍ້ມູນທີ່ກ່ຽວຂ້ອງກັບຈຸດປະສົງຂອງການຄົ້ນຄວ້າ ເພື່ອມາສ້າງແບບສອບຖາມ. ເມື່ອສ້າງແບບສອບຖາມສຳເລັດແລ້ວ ໄດ້ນຳໄປໃຫ້ຜູ້ຊ່ຽວຊານ 3 ທ່ານ ກວດສອບຄວາມສອດຄ່ອງຂອງແຕ່ລະຄຳຖາມໃນແບບສອບຖາມ ພາຍຫຼັງການປະເມີນທຸກຂໍ້ຄຳຖາມຈາກຜູ້ຊ່ຽວຊານເຫັນວ່າ ທຸກຂໍ້ຄຳຖາມມີຄ່າ IOC = 0.66-1. ຈາກນັ້ນໄດ້ນຳແບບສອບຖາມມາປັບປຸງໃຫ້ມີຄວາມສົມບູນຂຶ້ນ.

ໂດຍແບ່ງແບບສອບຖາມອອກເປັນ 3 ພາກສ່ວນຄື: ພາກທີ 1 ແມ່ນຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ພາກທີ 2 ແມ່ນຂໍ້ມູນກ່ຽວກັບມາດຕະຖານຄຸນນະພາບການສຶກສາໂຮງຮຽນມັດທະຍົມສຶກສາພາຍໃນໂຮງຮຽນມັດທະຍົມສົມບູນປະຊາທິປະໄຕ ຢູ່ນະຄອນຫຼວງພະບາງ ພາກທີ 3 ເປັນຄຳຖາມປາຍເປີດຂໍ້ສະເໜີແນະ ແລະ, ແນວທາງໃນການປັບປຸງແກ້ໄຂ.

### 2.3 ການເກັບຮວບຮວມຂໍ້ມູນ

ການເກັບຂໍ້ມູນເພື່ອການສຶກສາໃນຄັ້ງນີ້ແມ່ນເກັບແບບງ່າຍດາຍ ໂດຍການນຳແບບສອບຖາມຈຳນວນ 46 ສະບັບໄປຢາຍໃຫ້ຜູ້ບໍລິຫານແລະພະນັກງານຄູກຸ່ມຕົວຢ່າງຕອບ ໂດຍການອະທິບາຍວິທີການຕອບຢ່າງລະອຽດ ແລະ ໃຫ້ເວລາຕອບ 30 ນາທີ ແລ້ວເກັບແບບສອບຖາມຄືນ ເຊິ່ງສາມາດເກັບແບບສອບຖາມຄືນໄດ້ທັງໝົດ 100%.

### 2.4 ການວິເຄາະຂໍ້ມູນ

ບັນດາຂໍ້ມູນທັງໝົດທີ່ໄດ້ຈາກແບບສອບຖາມແມ່ນໄດ້ນຳມາວິເຄາະດ້ວຍໂປຼແກຼມ SPSS version 2025 ເພື່ອວິເຄາະຫາຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (S.D) ແລະ ສະຫຼຸບ, ສັງລວມ ແລະ ສັງເຄາະຂໍ້ມູນກ່ຽວກັບແນວທາງໃນການປັບປຸງ ແລະ ພັດທະນາການປະກັນຄຸນນະພາບການສຶກສາພາຍໃນໂຮງຮຽນມັດທະຍົມສົມບູນປະຊາທິປະໄຕ ຢູ່ນະຄອນຫຼວງພະບາງ.

## 3. ຜົນໄດ້ຮັບ

ຜົນການສຶກສາພົບວ່າການປະກັນຄຸນນະພາບການສຶກສາພາຍໃນໂຮງຮຽນມັດທະຍົມສົມບູນປະຊາທິປະໄຕຢູ່ນະຄອນຫຼວງພະບາງໂດຍລວມ ແລະ ແຕ່ລະດ້ານຢູ່ໃນລະດັບຫຼາຍ. ລາຍລະອຽດແຕ່ລະດ້ານມີດັ່ງນີ້: ດ້ານຜູ້ຮຽນ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ ( $\bar{X} = 4.34; S.D = 0.44$), ດ້ານການຮຽນ-ການສອນ ໂດຍພາບລວມແມ່ນຢູ່ໃນລະ ດັບຫຼາຍ( $\bar{X}$=4.38; S.D= 0.49 ), ດ້ານສິ່ງແວດລ້ອມໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ ( $\bar{X}$=4.10; S.D= 0.65 ); ດ້ານອຸປະກອນການຮຽນ-ການສອນ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ ( $\bar{X}$=3.86; S.D= 0.64 ), ດ້ານການຄຸ້ມຄອງ-ບໍລິຫານ ໂດຍພາບລວມແມ່ນຢູ່ໃນລະດັບຫຼາຍ ( $\bar{X}$=4.42; S.D= 0.42 ), ດ້ານການມີສ່ວນຮ່ວມຂອງຊຸມຊົນ ໂດຍພາບລວມແມ່ນຢູ່ໃນລະດັບປານກາງ ( $\bar{X}$= 3.45; S.D= 0.54 ).

ແນວທາງການພັດທະນາການຈາກຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນກ່ຽວກັບການປະກັນຄຸນນະພາບການສຶກສາພາຍໃນໂຮງຮຽນມັດທະຍົມສົມບູນ ປະຊາທິປະໄຕ ຢູ່ນະຄອນຫຼວງພະບາງ

1) ດ້ານຜູ້ຮຽນ ນັກຮຽນສ່ວນຫຼາຍຍັງບໍ່ທັນຕັ້ງໃຈຮຽນສາເຫດບໍ່ມີຄວາມຮູ້ພື້ນຖານ, ຫຼິ້ນໂທລະສັບ, ປະຕິບັດລະບຽບຂອງໂຮງຮຽນບໍ່ທັນໄດ້ດີ, ມາໂຮງຮຽນບໍ່ທັນເວລາ, ຂາດຄວາມກະຕືລືລົ້ນໃນການຮຽນບໍ່ມີເປົ້າໝາຍໃນອານາຄົດຄິດວ່າຮຽນຈົບໄປແລ້ວບໍ່ມີວຽກເຮັດ, ຄວນມີການສົ່ງເສີມ ແລະແນະນຳນັກຮຽນໃຫ້ເຫັນໄດ້ຄວາມສຳຄັນໃນການຮຽນແລະໄດ້ປະຕິບັດຕົວຈິງໃຫ້ຫຼາຍຂຶ້ນ, ປັບກົດລະບຽບຂອງນັກຮຽນໃຫ້ເຂັ້ມງວດໂດຍເນັ້ນໃສ່ໃຫ້ນັກຮຽນຕັ້ງໃຈຮ່ຳຮຽນ, ບໍ່ຂາດຮຽນ, ມາທັນເວລາ ແລະ ເຮັດວຽກບ້ານພ້ອມທັງກວດກາເປັນປົກກະຕິ.

2) ດ້ານການຮຽນ-ການສອນ ຄູຈຳນວນໜຶ່ງຍັງຖືເບົາບໍ່ແຕ່ງບົດສອນບາງບົດກ່ອນຂຶ້ນຫ້ອງ, ຄວາມຮູ້ທາງດ້ານວິຊາສະເພາະຍັງບໍ່ທັນເລິກເຊິ່ງຂາດປະສົບການ, ສອນຫຼາຍຕຳລາບາງວິຊາສອນບໍ່ຖືກຕາມວິຊາສະເພາະທີ່ຮຽນມາ, ນັກຮຽນຍັງຂາດການມີສ່ວນຮ່ວມໃນການເຮັດກິດຈະກຳ ແລະ ບໍ່ຈົດບົດຮຽນ, ຄູຄວນສິ່ງຄວາມຮູ້ໃຫ້ແທດເໝາະກັບສະພາບການຮຽນ-ການສອນດ້ວຍຫຼາກຫຼາຍວິທີ ເພື່ອສ້າງແຮງຈູງໃຈໃຫ້ນັກຮຽນກະຕຸນໃນການຮຽນມີການແຂ່ງຂັນກັນ, ຄູຄວນມີຄວາມພ້ອມໃນທຸກດ້ານ, ຄັດເລືອກເອົາຄູທີ່ໄດ້ມາດຕະຖານ, ກວດກາລະບຽບຄູ-ນັກຮຽນຢ່າງເຂັ້ມງວດ ແລະ ມີການຍ້ອງຍໍຊົມເຊີຍຄູທີ່ສອນດີ-ສອນເກັ່ງສ້າງຜົນງານໃຫ້ໂຮງຮຽນ,ນັກຮຽນທີ່ຮຽນເກັ່ງ, ປັບປຸງການສອນ ແລະ ຄວນສິ່ງຄູໄປຍົກລະດັບເພື່ອພັດທະນາຕົນເອງທາງດ້ານວິຊາສະເພາະ ແລະ ເທັກໂນໂລຍີໃຫ້ດີຂຶ້ນ.

3) ດ້ານສະພາບແວດລ້ອມ ເດີ່ນໂຮງຮຽນຍັງຄັບແຄບບໍ່ມີບ່ອນໃຫ້ນັກຮຽນຫຼິ້ນກິລາພຽງພໍ, ມີສຽງລົບກວນເວລາຮຽນຍ້ອນໂຮງຮຽນຕັ້ງຢູ່ແຄມທາງໃຫຍ່,ຄວນຮັກສາສິ່ງແວດລ້ອມໃນໂຮງຮຽນໃຫ້ສະອາດ ແລະ ປັບປຸງຕົບແຕ່ງໃຫ້ມີຄວາມສວຍງາມ, ຄວນຈັດສັນເດີ່ນໂຮງຮຽນໃຫ້ເປັນລະບົບ, ກວດເບິ່ງສະພາບອຸປະກອນຕ່າງໆພາຍໃນຫ້ອງຮຽນເພື່ອກຽມຄວາມພ້ອມໃນການຮຽນ.

4) ດ້ານອຸປະກອນການຮຽນ-ການສອນ ອຸປະກອນກິລາ ແລະ ສື່ການຮຽນ-ການສອນໃນຫ້ອງທົດລອງຍັງບໍ່ທັນພຽງພໍ, ອຸປະກອນໃນຫ້ອງຮຽນຈຳນວນໜຶ່ງເປ່ເພ,ອາຄານຮຽນຊຸດໂຊມບໍ່ພຽງພໍໃນການຮຽນ,ຜູ້ບໍລິຫານໂຮງຮຽນຄວນລົງກວດກາເບິ່ງສະພາບອຸປະກອນຕ່າງໆພາຍໃນຫ້ອງຮຽນໃຫ້ພຽງພໍ ແລະ ອຸປະກອນທີ່ຈຳເປັນຕໍ່ການຮຽນ-ການສອນໃຫ້ມີໄວ້ຢູ່ຕະຫຼອດເວລາ, ຄູຄວນຜະລິດສື່ການຮຽນ-ການສອນໃຫ້ຫຼາຍຂຶ້ນ, ນຳໃຊ້ຫໍສະມຸດຄຽງຄູ່ກັບການຮຽນ-ການສອນ ແລະ ຄວນມີເຄື່ອງມືໃນການທົດລອງປະຕິບັດຕົວຈິງ ແລະ ຄອມພິວເຕີໃຫ້ພຽງພໍ.

5) ດ້ານການຄຸ້ມຄອງ-ບໍລິຫານ ການຄຸ້ມຄອງບໍລິຫານຍັງຂາດການຄຸ້ມຄອງຕິດຕາມ, ກວດກາ-ປະເມີນຜົນ,ການປະຕິບັດແຜນຍັງບໍ່ທັນເປັນເອກະພາບກັນ, ຄວນມີການວາງແຜນພັດທະນນາໂຮງຮຽນຢ່າງມີຈຸດສຸມທັງໄລຍະສັ້ນແລະໄລຍະຍາວ, ຄວນໃຫ້ຄູມີສ່ວນຮ່ວມໃນການປຶກສາຫາລືໃນການວາງແຜນການເຮັດວຽກ ແລະ ການສອນຮ່ວມກັນກັບຄະນະອຳນວຍການໃຫ້ຫຼາຍຂຶ້ນ ເພື່ອສ້າງຄວາມເຂົ້າໃຈເພື່ອແກ້ໄຂຂໍ້ຄົງຄ້າງຢ່າງຖືກຕ້ອງ ແລະ ຕົງປະເດັນ, ຄວນເປີດໂອກາດໃຫ້ຄູໄດ້ຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະ ແລະ ທິດສະດີການເມືອງຜູ້ທີ່ມີຜົນງານໃນການປະຕິບັດໜ້າວຽກທີ່ດີ.

6) ດ້ານການມີສ່ວນຮ່ວມຂອງຊຸມຊົນ ຜູ້ປົກຄອງສ່ວນຫຼາຍຍັງບໍ່ທັນໃຫ້ການຮ່ວມມືນຳໂຮງຮຽນ, ຂາດການຕິດຕາມຜົນການຮຽນຂອງລູກຫຼານໂດຍສະເພາະຜູ້ທີ່ຮຽນອ່ອນ, ຜູ້ປົກຄອງຄວນເພີ່ມການສະໜັບສະໜູນການສຶກສາ, ໂຮງຮຽນຄວນລົງໃກ້ສິດຕິດແທດກັບສະມາຄົມພໍ່ແມ່ຜູ້ປົກຄອງ, ຄະນະພັດທະນາການສຶກສາຂັ້ນບ້ານເພື່ອຊີ້ແຈງໃຫ້ເຫັນໄດ້ຄວາມສຳຄັນຂອງວຽກງານການສຶກສາ, ປຸກລະດົມຊຸມຊົນໃຫ້ມີສ່ວນຮ່ວມປະກອບສ່ວນຊ່ວຍເຫຼືອ ແລະ ປົກປັກຮັກສາໂຮງຮຽນໃຫ້ມີຄວາມປອດໄພເພື່ອພັດທະນາໂຮງຮຽນໃຫ້ດີຂຶ້ນ.

## 4. ວິພາກຜົນ

ຈາກການສຶກສາກ່ຽວກັບການຈັດຕັ້ງປະຕິບັດວຽກງານການປະກັນຄຸນນະພາບການສຶກສາພາຍໃນໂຮງຮຽນມັດທະຍົມສົມບູນປະຊາທິປະໄຕ ຢູ່ນະຄອນ-ຫຼວງພະບາງ ທັງ 6 ດ້ານພົບວ່າ ໂດຍລວມແມ່ນຢູ່ໃນລະດັບຫຼາຍ ເນື່ອງຈາກວຽກງານການປະກັນຄຸນນະພາບການສຶກສາໃນໂຮງຮຽນເປັນວຽກທີ່ທ້າທ້າຍ ແລະ ເປັນວຽກລະອຽດ ເຊິ່ງຮຽກຮ້ອງໃຫ້ນຳໃຊ້ຄວາມຮູ້ຄວາມສາມາດທາງດ້ານການວິເຄາະ, ຄົ້ນຄວ້າ ແລະ ຄວາມຮັບຜິດຊອບສູງ. ສະນັ້ນ ຜູ້ບໍລິຫານ ແລະ ຄູໄດ້ໃຫ້ຄວາມສຳຄັນການປະຕິບັດຕາມມາດຕະຖານການປະກັນຄຸນນະພາບການສຶກສາໃນໂຮງຮຽນ ໃນການຄິດ, ການຕັດສິນໃຈ ຫຼື ສົ່ງເສີມສະໜັບສະໜູນດ້ານຜູ້ຮຽນ, ດ້ານການຮຽນ-ການສອນ, ດ້ານສະພາບແວດລ້ອມ, ດ້ານອຸປະກອນການຮຽ-ການສອນ, ດ້ານຄຸ້ມຄອງ-ບໍລິຫານ ແລະ ດ້ານການມີສ່ວນຮ່ວມຂອງຊຸມຊົນ ແຕ່ກໍ່ບໍ່ສາມາດເອົາຊະນະຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດຕາມມາດຕະຖານປະກັນຄຸນນະພາບການສຶກສາໃນໂຮງຮຽນໄດ້ ເຊິ່ງສອດຄອງກັບຜົນການຄົ້ນຄວ້າຂອງ Tangman (2021) ສຶກສາການດຳເນີນການປະກັນຄຸນນະພາບພາຍໃນສະຖານການສຶກສາສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາ ເຂດ 4 ຈັງຫວັດ ປະທຸມທານີ ຜົນການຄົ້ນຄວ້າພົບວ່າຢູ່ໃນລະດັບຫຼາຍ ເຊິ່ງສອດຄ່ອງກັບ Kosai et al. (2024) ສຶກສາກ່ຽວກັບ ແນວທາງການປະກັນຄຸນນະພາບການສຶກສາໂຮງຮຽນທີ່ຂຶ້ນກັບຫ້ອງການໃນຊັ້ນມັດທະຍົມສຶກສາແມ່ຫ້ອງສອນ ຜົນການຄົ້ນຄວ້າຢູ່ໃນລະດັບຫຼາຍ ເຊິ່ງບໍ່ມີຄວາມສອດຄອງກັບຜົນການຄົ້ນຄວ້າຂອງ Phavongsay (2018) ສຶກສາການປະຕິບັດມາດຕະຖານປະກັນຄຸນນະພາບຂອງໂຮງຮຽນມັດທະຍົມສຶກສາພາກເອກະຊົນ 4 ເມືອງໃນນະຄອນຫຼວງວຽງຈັນ ໂດຍລວມແມ່ນຢູ່ໃນລະດັບປານກາງ ເນື່ອງຈາກວຽກງານການປະກັນຄຸນນະພາບການສຶກສາໃນໂຮງຮຽນເປັນວຽກທີ່ທ້າທາຍ ແລະ ລະອຽດ ເຊິ່ງຮຽກຮ້ອງໃຫ້ນຳໃຊ້ຄວາມຮູ້, ຄວາມສາມາດທາງດ້ານການວິເຄາະ, ຄົ້ນຄວ້າ, ວິຈານ ແລະ ຄວາມຮັບຜິດຊອບສູງ. ສະນັ້ນ, ເຖິງແມ່ນວ່າຜູ່ບໍລິຫານ ແລະ ຄູສອນໄດ້ໃຫ້ຄວາມສຳຄັນໃນການປະຕິບັດຕາມມາດຕະຖານການປະກັນຄຸນນະພາບການສຶກສາພາຍໃນໂຮງຮຽນ ໃນການຄິດ, ການຕັດສິນໃຈ ຫຼື ການສະໜັບສະໜູນດ້ານຜູ່ຮຽນ, ດ້ານການຮຽນ-ການສອນ, ດ້ານສະພາບແວດລ້ອມ, ດ້ານອຸປະກອນການຮຽນ-ການສອນ, ດ້ານຄຸ້ມຄອງ-ບໍລິຫານ ແລະ ດ້ານການມີສ່ວນຮ່ວມຂອງຊຸມຊົນ ກໍ່ຕາມແຕ່ບໍ່ສາມາດເອົາຊະນະຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດຕາມມາດຕະຖານການປະກັນຄຸນນະພາບການສຶກສາພາຍໃນໂຮງຮຽນໄດ້ ເຊິ່ງບໍ່ສອດຄ່ອງກັບຜົນການຄົ້ນຄວ້າຂອງ Bumroong-Ayosakoon et al. (2021) ສຶກສາແນວທາງການປະກັນຄຸນນະພາບການສຶກສາພາຍໃນຕາມຫຼັກ ອິທິປະໄພ 4 ຂອງໂຮງຮຽນສາມັນສຶກສາເອກະຊົນ ນະຄອນສີທຳມະລາດ ຜົນການຄົ້ນຄວ້າພົບວ່າ ການດຳເນີນການປະກັນຄຸນນະພາບການສຶກສາທັງຫົກດ້ານ ມີການດຳເນີນການໂດຍລວມຢູ່ໃນລະດັບຫຼາຍເຊັ່ນດຽວກັນ (Chanthavong et al., 2024) ສຶກສາສະພາບການພັດທະນາຄຸນນະພາບການສຶກສາຕາມມາດຕະຖານ ແລະ ຕົວຊີ້ບອກຂອງກົມການສຶກສາຊັ້ນສູງ ກະຊວງສຶກສາທິການ ແລະ ກິລາ ໃນວິທະຍາຄານການເມືອງປ້ອງກັນຄວາມສະຫງົບ ພົບວ່າຜົນການຄົ້ນຄວ້າໂດຍລວມແມ່ນຢູ່ໃນລະດັບຫຼາຍ ເມື່ອທຽບກັບເກນມາດຕະຖານໃນການປະກັນ

ຄຸນນະພາບຂອງກະຊວງສຶກສາທິການ ແລະ ກິລາແລ້ວຖືວ່າຢູ່ໃນລະດັບເກນໃຊ້ໄດ້ເຊິ່ງການກຳນົດ ເກນໃນການປະຕິບັດແມ່ນ ດີ ໄດ້ຕາມຄາດໝາຍ (ຄູ່ມືມາດຕະຖານຄຸນນະພາບການສຶກສາສຳລັບຊັ້ນມັດທະຍົມສຶກສາ, 2013a) ແຕ່ແນວໃດກໍຕາມເມື່ອພິຈາລະນາລາຍລະອຽດໃນແຕ່ລະດ້ານຍັງມີບາງບັນຫາຕ້ອງໄດ້ປັບປຸງ ແລະ ພັດທະນາ ເຊັ່ນ ດ້ານຜູ້ຮຽນ ແມ່ນ ຢູ່ໃນລະດັບຫຼາຍ ເຫັນວ່ານັກຮຽນຍັງບໍ່ທັນເອົາໃຈໃສ່ຕໍ່ການຮຽນ, ເຮົາໄປຕາມກະແສສັງຄົມ, ຫຼິ້ນໂທລະສັບ ແລະ ສື່ທາງສັງຄົມອອນລາຍ, ວາງກົດລະບຽບຂອງໂຮງຮຽນໃຫ້ເຂັ້ມງວດກວ່າເກົ່າ, ເນັ້ນໃຫ້ນັກຮຽນມາໂຮງຮຽນທັນເວລາ, ກະຕືລືລົ້ນຕໍ່ການຮຽນ ແລະ ມີເປົ້າໝາຍໃນການຮຽນຫຼັງຈາກຈົບການສຶກສາ. ສ່ວນດ້ານການຮຽນ-ການສອນ ຄູຄວນເປີດໂອກາດໃຫ້ນັກຮຽນເພື່ອສ້າງແຮງຈູງໃຈໃຫ້ນັກຮຽນກະຕຸ້ນມີການແຂ່ງຂັນກັນໃນການຮຽນ, ຄູຄວນມີຄວາມພ້ອມໃນທຸກດ້ານ, ຄັດເລືອກເອົາຄູທີ່ໄດ້ມາດຕະຖານ, ມີການຍ້ອງຍໍຊົມເຊີຍຄູທີ່ສອນດີ-ສອນເກັ່ງ, ປັບປຸງການສອນ ແລະຄວນສົ່ງຄູໄປຍົກລະດັບເພື່ອພັດທະນາຕົນເອງທາງດ້ານວິຊາສະເພາະ ແລະ ເທັກໂນໂລຍີໃຫ້ດີຂຶ້ນ. ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Phonphanith T. et al. (2024) ສຶກສາຄວາມເປັນຜູ່ນຳທາງວິຊາການຂອງຜູ້ບໍລິຫານການສຶກສາທີ່ສົ່ງຜົນຕໍ່ຄຸນນະພາບການຈັດການຮຽນ-ການສອນທີ່ສະຖານການສຶກສາຄູ ໃນ ສປປ ລາວ ຜົນການຄົ້ນຄວ້າໂດຍລວມ ແລະລາຍດ້ານຢູ່ໃນລະດັບຫຼາຍ, ເຊິ່ງສອດຄອງກັບຜົນການຄົ້ນຄວ້າຂອງ Keoboualaphet & Phommaseng (2015) ການສຶກສາຄັ້ງນີ້ສະແດງໃຫ້ເຫັນວ່າ ອາຈານໄດ້ນຳໃຊ້ວິທີການສອນຫຼາຍຮູບແບບ, ແຕ່ວ່າອາຈານສ່ວນໃຫຍ່ມີວຸດທິການສຶກສາຍັງຕໍ່າ, ປະສົບການຍັງອ່ອນນ້ອຍ ແລະອຸປະກອນການສອນຍັງຈຳກັດ. ບາງອາຈານໄດ້ພົບຂໍ້ຫຍຸ້ງຍາກບາງຢ່າງເຊັ່ນ: ອິນເຕີເນັດຊ້າ, ທັກສະວິຊາສະເພາະມີຈຳກັດ, ເວລາມີບໍ່ພຽງພໍເນື່ອງຈາກຮັບຜິດຊອບຫຼາຍໜ້າທີ່, ຫ້ອງຮຽນຍັງແອອັດຫຼາຍ, ຄວນເອົາໃຈໃສ່ ແລະ ກະຕືລືລົ້ນຕໍ່ການຮຽນຂອງນັກສຶກສາຈຳນວນໜຶ່ງຍັງມີບໍ່ທັນສູງ ການສຶກສາຄັ້ງນີ້ຍັງໄດ້ແນະນຳບາງຄຳຄິດເຫັນ ເພື່ອປັງປຸງຄຸນນະພາບການສິດສອນ. ເຊິ່ງສອດຄອງຜົນການຄົ້ນຄວ້າຂອງ Sisomphou (2024) ໄດ້ສຶກສາກ່ຽວກັບ ແນວທາງການປັບປຸງ ແລະ ພັດທະນາຄຸນນະພາບການສຶກສາຂອງສະຖານການສຶກສາຄູແຫ່ງ ສປປ ລາວ ພົບວ່າໂດຍລວມ ແລະ ແຕ່ລະດ້ານມີບັນຫາຢູ່ໃນລະດັບຫຼາຍ ບໍ່ວ່າຈະເປັນດ້ານສະພາບແວດລ້ອມ ແລະແຫຼ່ງການຮຽນຮູ້ ແລະ ດ້ານການພັດທະນາບຸກຄະລາກອນ ຄວນມີແນວງທາງໃນການປັບປຸງ ແລະ ພັດທະ ນາຄຸນນະພາບການສຶກສາຂອງສະຖານການສຶກສາຄູ ໃນ ສປປ ລາວ ແຕ່ລະດ້ານຕ້ອງມີການຂຶ້ນແຜນງົບປະມານໃຊ້ຈ່າຍຕ່າງໆໃຫ້ຈະແຈ້ງ, ຮັດກຸມ, ສອດຄ່ອງກັບນິຕິກຳ ໂດຍສະເພາະການພັດທະນາທາງດ້ານວິຊາການ, ຊຸກຍູ້ ແລະ ສົ່ງເສີມໃຫ້ບຸກຄະລາກອນມີການພັດທະນາຕົນຢ່າງຕັ້ງໜ້າ ແລະ ຕໍ່ເນື່ອງ, ມອບໝາຍວິຊາສອນໃຫ້ສອດຄ່ອງກັບວິຊາສະເພາະທີ່ຮຽນ, ການປັບປຸງຫຼັກສູດຄວນເນັ້ນພາກປະຕິບັດໃຫ້ຫຼາຍ ແລະໃຫ້ສອດຄ່ອງຕາມນິຕິກຳທີ່ກຳນົດໄວ້ ແລະຕະຫຼາດແຮງງານ, ມີການປະເມີນຫຼັກສູດກ່ອນການປັບປຸງ ແລະພັດທະນາ, ເປີດໂອກາດໃຫ້ຫຼາຍພາກສ່ວນໄດ້ມີສ່ວນຮ່ວມ ເຊິ່ງສອດຄອງຜົນການຄົ້ນຄວ້າຂອງ Mohzana et al. (2024) ສຶກສາກ່ຽວກັບລະບົບການປະກັນຄຸນນະພາບໃນການປັບປຸງຄຸນນະພາບການສຶກສາຂອງໂຮງຮຽນ  ຜົນການຄົ້ນຄວ້າພົບວ່າ ລະບົບການປະກັນຄຸນນະພາບຍັງບໍ່ທັນໄດ້ດີ, ໜຶ່ງໃນນັ້ນແມ່ນການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງຂອງການສຶກສາເພື່ອສະໜັບສະໜຸນການພັດທະນາຄຸນນະພາບ, ຂາດການຈັດສັນທຶນຮອນ. ສະຖານການສຶກສາຄູຄວນມີການປະເມີນ ແລະ ຈັດຝຶກອົບຮົມນຳໃຊ້ຫຼັກສູດໃຫ້ຄູສອນເປັນລາຍວິຊາຢ່າງຕໍ່ເນື່ອງ ແລະ ຄະນະນຳສະຖານການສຶກສາຄູຄວນເອົາໃຈໃສ່ຕິດຕາມການສອນຂອງຄູເປັນປົກກະຕິ, ມີການຈັດຝຶກອົບຮົມທັກສະ ສະເພາະແລກປ່ຽນວິຊາການກັບສະຖານການສຶກສາອື່ນໆ, ມີການຄົ້ນຄວ້າວິທະຍາສາດ, ມີເຄື່ອງມືປະເມີນການຮຽນ-ການສອນທີ່ໜ້າເຊື່ອຖື, ມີການກວດກາ, ຕິດຕາມ, ປະເມີນຜົນຢ່າງຕໍ່ເນື່ອງ ແລະ ຄວນສ້າງນິຕິກຳ, ຂໍ້ກຳນົດ ແລະ ລະບຽບການໃນການນຳໃຊ້ສິ່ງແວດລ້ອມ ແລະ ແຫຼ່ງຮຽນຮູ້ເພື່ອສະດວກໃນການຄຸ້ມຄອງກະຕຸກຊຸກຍູ້ທຸກພາກສ່ວນມີສ່ວນຮ່ວມໃນການຊົມໃຊ້ ແລະ ບຳລຸງຮັກສາ, ຕອບສະໜອງສິ່ງອຳນວຍການສະດວກຕ່າງໆໃຫ້ທຸກຄົນສາມາດນຳໃຊ້ໄດ້. ເຊິ່ງສອດຄ່ອງຜົນການຄົ້ນຄວ້າຂອງ Bounkeamany et al. (2024) ໄດ້ສຶກສາກ່ຽວກັບລະດັບການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາຄຸນນະພາບການສຶກສາ ຊັ້ນປະຖົມສຶກສາທີ່ເມືອງປາກອູ ແຂວງຫຼວງພະບາງ ໂດຍລວມຊຸມຊົນມີສ່ວນຮ່ວມຢ່າງຕັ້ງໜ້າໃນການພັດທະນາວຽກງານການສຶກສາ ທັງດ້ານການສົ່ງເສີມນັກຮຽນ, ດ້ານການຮູ້ຈັກນັກຮຽນເປັນສ່ວນບຸກຄົນ ແລະດ້ານການກັ່ນຕອງນັກຮຽນ. ຄວນເປີດໂອກາດໃຫ້ຊຸມຊົນມີສ່ວນຮ່ວມຢ່າງຕັ້ງໜ້າໃນການກຳນົດແຜນນະໂຍບາຍ ແລະ ຍຸດທະສາດການພັດທະນາການສຶກສາ, ການພັດທະນາຫຼັກສູດການສຶກສາ, ການບໍລິຫານຈັດການຫຼັກສູດ ແລະ ມີແນວທາງທີ່ຊັດເຈນໃນການປະສານງານຮ່ວມມືກັບຊຸມຊົນ.

## 5. ສະຫຼຸບ

ຈາກການສຶກສາການຈັດຕັ້ງປະຕິບັດວຽກງານການປະກັນຄຸນນະພາບການສຶກສາພາຍໃນໂຮງຮຽນມັດທະຍົມສົມບູນປະຊາທິປະໄຕ ຢູ່ນະຄອນ ຫຼວງພະບາງ ພົບວ່າໂດຍລວມຢູ່ໃນລະດັບຫຼາຍ ເມື່ອພິຈາລະນາເປັນລາຍດ້ານໂດຍລຽງລຳດັບຈາກຫຼາຍໄປຫານ້ອຍ 2 ລຳດັບ ດັ່ງນີ້ ດ້ານຜູ່ຮຽນ, ດ້ານການຮຽນ-ການສອນ, ດ້ານສະພາບແວດລ້ອມ,ດ້ານອຸປະກອນການຮຽນ-ການສອນ ແລະ ດ້ານການຄຸ້ມຄອງບໍລິຫານ ຢູ່ໃນລະດັບຫຼາຍ ຮອງລົງມາແມ່ນດ້ານການມີສ່ວນຮ່ວມຂອງຊຸມຊົນ ຢູ່ໃນລະດັບປານກາງຕາມລຳດັບ. ຈາກແນວທາງການຈັດຕັ້ງປະຕິບັດວຽກງານການປະກັນຄູນນະພາບການສຶກສາໃນແຕ່ລະດ້ານເຊັ່ນ: ຄວນມີການສົ່ງເສີມ, ແນະນຳນັກຮຽນໃຫ້ເຫັນໄດ້ຄວາມສຳຄັນໃນການຮຽນຕັ້ງໃຈຮ່ຳຮຽນ, ບໍ່ຂາດຮຽນມາໃຫ້ທັນເວລາ, ເຮັດວຽກບ້ານເປັນປົກກະຕິ ແລະ ປະຕິບັດກົດລະບຽບໂຮງຮຽນຢ່າງເຂັ້ມງວດ, ຄູຄວນສິ່ງຄວາມຮູ້ໃຫ້ນັກຮຽນໃຫ້ແທດເໝາະກັບສະພາບການຮຽນ-ການສອນດ້ວຍຫຼາກຫຼາຍວິທີ ເພື່ອສ້າງແຮງຈູງໃຈໃຫ້ນັກຮຽນສົນໃຈໃນການຮຽນມີການແຂ່ງຂັນກັນ, ຄັດເລືອກເອົາຄູທີ່ໄດ້ມາດຕະຖານມີຄວາມພ້ອມໃນທຸກດ້ານ, ມີການຍ້ອງຍໍຊົມເຊີຍຄູທີ່ສອນດີ-ສອນເກັ່ງສ້າງຜົນງານໃຫ້ໂຮງຮຽນ ພ້ອມທັງສົ່ງໄປຍົກລະດັບເພື່ອພັດທະນາທາງດ້ານວິຊາສະເພາະ ແລະ ເທັກໂນໂລຍີໃຫ້ດີຂຶ້ນ. ປຸກລະດົມນັກຮຽນໃຫ້ຮັກສາສິ່ງແວດລ້ອມ ອານາໄມເດີ່ນໂຮງຮຽນໃຫ້ສະອາດ, ສວຍງາມ, ກວດເບິ່ງສະພາບອຸປະກອນຕ່າງໆພາຍໃນຫ້ອງ

ຮຽນເພື່ອກຽມຄວາມພ້ອມໃນການຮຽນ. ຜູ້ບໍລິຫານໂຮງຮຽນຄວນລົງຕິດຕາມກວດກາເປັນປົກກະຕິ ສະໜອງອຸປະກອນທີ່ຈຳເປັນໃຫ້ພຽງພໍເຂົ້າໃນການຮຽນ-ການສອນ, ຄູຄວນຜະລິດສື່ການຮຽນ-ການສອນໃຫ້ຫຼາຍຂຶ້ນ, ນຳໃຊ້ຫໍສະມຸດຄຽງຄູ່ກັບການຮຽນ-ການສອນ, ຄວນມີເຄື່ອງມືໃນການທົດລອງປະຕິບັດຕົວຈິງ ແລະ ຄອມພິວເຕີໃຫ້ພຽງພໍ. ຄວນມີການວາງແຜນພັດທະນາໂຮງຮຽນຢ່າງມີຈຸດສຸມທັງໄລຍະສັ້ນ ແລະໄລຍະຍາວ, ຄູຄວນມີສ່ວນຮ່ວມໃນການປຶກສາຫາລືໃນການວາງແຜນການເຮັດວຽກ ເພື່ອແກ້ໄຂຂໍ້ຄົງຄ້າງຢ່າງຖືກຕ້ອງ ແລະ ຕົງປະເດັນ, ເປີດໂອກາດໃຫ້ຄູຜູ້ທີ່ມີຜົນງານດີເດັ່ນໄດ້ຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະ ແລະ ທັດສະນະການເມືອງເພື່ອພັດທະນາໃຫ້ດີຂຶ້ນ. ຄວນລົງໃກ້ສິດຕິດແທດກັບສະມາຄົມພໍ່ແມ່ຜູ້ປົກຄອງ, ຄະນະພັດທະນາການສຶກສາຂັ້ນບ້ານເພື່ອຊີ້ແຈງໃຫ້ເຫັນໄດ້ຄວາມສຳຄັນຂອງວຽກງານການສຶກສາ, ປຸກລະດົມຊຸມຊົນໃຫ້ມີສ່ວນຮ່ວມປະກອບສ່ວນຊ່ວຍເຫຼືອ ແລະ ປົກປັກຮັກສາໂຮງຮຽນໃຫ້ມີຄວາມປອດໄພເພື່ອພັດທະນາໂຮງຮຽນໃຫ້ດີຂຶ້ນ.

ຈາກການຈັດຕັ້ງປະຕິບັດວຽກງານການປະກັນຄຸນນະພາບການສຶກສາ ຜູ້ບໍລິຫານຈຳເປັນຕ້ອງມີວິໄສທັດ ແລະ ຄວາມມຸ່ງໝັ້ນໃນການພັດທະນາວຽກງານການປະກັນຄຸນນະພາບການສຶກສາ ຄວນມີທັກສະການບໍລິຫານຈັດການທີ່ດີ ສາມາດຈັດສັນຊັບພະຍາກອນ ແລະ ບຸກຄະລາກອນໄດ້ຢ່າງມີປະສິດທິພາບ ໂດຍຕ້ອງເປັນຜູ້ລິເລີ່ມ ແລະ ຂັບເຄື່ອນນະໂຍບາຍກ່ຽວກັບການປະກັນຄຸນນະພາບການສຶກສາພາຍໃນໂຮງຮຽນ ລວມເຖິງຕ້ອງສ້າງການມີສ່ວນຮ່ວມຂອງທຸກພາກສ່ວນໃນພັດທະນາຄຸນນະພາບການສຶກສາ ຈຶ່ງຈະສົ່ງຜົນໃຫ້ເກີດການແລກປ່ຽນຮຽນຮູ້ ແລະ ນຳໄປສູ່ການພັດທະນາໃຫ້ມີປະສິດທິພາບຍິ່ງຂຶ້ນຈະສາມາດພັດທະນາວຽກງານປະກັນຄຸນນະພາບການສຶກສາໄດ້ຢ່າງມີປະສິດທິພາບ ແລະ ເກີດປະໂຫຍດສູງສຸດຕໍ່ຜູ້ຮຽນເພື່ອສ້າງຄວາມໝັ້ນໃຈໃຫ້ແກ່ຜູ່ປົກຄອງ ແລະ ສັງຄົມຕໍ່ຄຸນນະພາບການສຶກສາ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2020). *ແຜນພັດທະນາຂະແໜງການສຶກສາທິການແລະກິລາ.* ກົດໝາຍການສຶກສາ . (2015). *ກະຊວງສຶກສາທິການແລະກິລາ.*

ຄະນະໂຄສະນາອົບຮົມສູນກາງພັກ. (2023). ເສີມຂະຫຍາຍປັດໄຈຄົນ ແລະການພັດທະນາຊັບພະຍາກອນມະນຸດໃນຍຸກສະໄໝໃໝ່ຢູ່ ສປປ ລາວ. *ວາລະສານອາລຸນໃໝ່.*

ຄູ່ມືມາດຕະຖານຄຸນນະພາບການສຶກສາສຳລັບຊັ້ນມັດທະຍົມສຶກສາ. (2013a). *ກະຊວງສຶກສາທິການແລະກິລາ.* ນະຄອນຫຼວງວຽງຈັນ.

ມາດຕະຖານຄຸນນະພາບການສຶກສາສຳລັບຊັ້ນປະຖົມສຶກສາ. (2013b). *ກະຊວງສຶກສາແລະກິລາ.* ນະຄອນຫຼວງວຽງຈັນ: ໂຮງພິມກະຊວງສຶກສາທິການແລະກິລາ.

ມາດຕະຖານຄຸນນະພາບການສຶກສາສຳລັບຊັ້ນມັດທະຍົມສຶກສາ. (2013c). *ກະຊວງສຶກສາທິການແລະກິລາ.* ນະຄອນຫຼວງວຽງຈັນ: ໂຮງພິມກະຊວງສຶກສາທິການແລະກິລາ.

ຫ້ອງການສຶກສາທິການແລະກິລານະຄອນຫຼວງພະບາງ. (2024). *ບົດສະຫຼຸບ ແລະ ແຜນພັດທະນາການສຶກສາ.*

Bounkeamany, H., Vathanavong, T., Khotsaino, S., & Bounkeomany, P. (2024). Community Participation in Developing Educational Quality for Primary School in Pakou District LuangPrabang. *Souphanouvong University Jurnal of Multidisciplinary Research and Development, 10*(spesial), 114.

Bumroong-Ayosakoon, T., Kosito, P., Somkhaoyai, T., & Chonrat, V. (2021). Guideline for Internal Education Quality Assurance According to the 4 Addhipadas Principle of Privates Schools for Ordinary Education Nakhon Sithamalath. *Mahachulalongkornravidyalaya University.188 Journal of Graduate MCU KHonkaen Compus Vol.8 N.3.*

Chanthavong, M., Luangrath, P., & Sisavath, T. (2024). *Guidelines for Developing the Quality of Education Based on Standards and Indecators of Higher Education Ministry of Education and sport in Political Academy of People Pubic Security.* Vientian capital: Vietian National university of Lao.

Keoboualaphet, S., & Phommaseng, S. (2015). *Selected Factors that Influence on the Quality of Teaching in the Faculty of Languages,Souphanouvong University.* Luangphabang: Souphanouvong University.

Kosai, W., Kosanpipath, S., & Poungkaew, P. (2024). *Chaing Mai Rajabhat University, Journal of Graduate Reseach*(Guidelines for the Development of Education Quality Assurance for Schools Under the Mae Hong Son Secondary Educational Service Area Office).

Likert, R. (1932). APA PsyNet. pp. https://psycnet.apa.org/record/1933-01885-001.

Mohzana, Arifin, M., & Pranawukir, I. (2024). Quality Assurance Systemp in Impoving the Quality of Education in Schools. *Hamzanwadi Indonisai,Jurnal managermen pendidigan.*

Phavongsay, O. (2018). *The Educational Quality Assurance Standard Implementation Of Private Secondary Schools in 4 Districts Vientaine Capital.University Nation of Laos* . Vientaine: University Nation of Laos.

Phonphanith, T., Souvannasay, B., Taykhambansy, k., Hongnou, O., & Sengsoulivong, T. (2024). *Insructional Leadership of Education Administrators Affects the Quality of Tearning at Teacher Training Institutes Lao PDR.* https://doi.org/National University of Lao

Sisomphou, K. (2024). The Guidelines for improving and developing the quality of education in the TeacherTraining Institutions (TTIs) in Lao PDR. *National University of LaosJurnal of Socail Science.*

Tangman, L. (2021). *Internai Quality Assurance in Educational Instituions under Pathum Tani Secondary Educational Service Area Office 4.*

**ຕາຕະລາງທີ 1**: ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານຂອງການປະຕິບັດ 6 ອົງປະກອບ ຕາມມາດຕະຖານການປະກັນຄຸນນພາບການສຶກສາ ຂອງໂຮງຮຽນມັດທະຍົມສຶກສາ ໂດຍລວມ ແລະ ລາຍດ້ານ.

| ລ/ດ | ອົງປະກອບຂອງມາດຕະຖານ | $\bar{X}$ | S.D | ແປຜົນ |
|---|---|---|---|---|
| 1 | ດ້ານຜູ້ຮຽນ | 4.22 | 0.45 | ຫຼາຍ |
| 2 | ດ້ານການຮຽນ-ການສອນ | 4.38 | 0.49 | ຫຼາຍ |
| 3 | ດ້ານການມີສ່ວນຮ່ວມຂອງຊຸມຊົນ | 4.10 | 0.65 | ຫຼາຍ |
| 4 | ດ້ານອຸປະກອນການຮຽນ-ການສອນ | 3.86 | 0.64 | ຫຼາຍ |
| 5 | ດ້ານການຄຸ້ມຄອງ-ບໍລິຫານ | 4.42 | 0.42 | ຫຼາຍ |
| 6 | ດ້ານການມີສ່ວນຮ່ວມຂອງຊຸມຊົນ | 3.45 | 0.54 | ກາງ |
| | ລວມ | 4.07 | 0.41 | ຫຼາຍ |